
ຄຳເວົ້າຂອງ
ພຣະຜູ້ສ້າງ
ບົດຮຽນທີ 1 ສຳລັບເດືອນຕຸລາທີ 3, 2026





“ໃນອະດີດຕະການນັ້ນ ພຣະເຈົ້າຊົງກ່າວແກ່ບັນພະບຸລຸດຂອງພວກເຮົາຫລາຍເທື່ອດ້ວຍວິທີຕ່າງໆ ໂດຍທາງບັນດາຜູ້ທຳນວາຍ, ແຕ່ໃນຍຸກສຸດທ້າຍນີ້ ພຣະອົງໄດ້ຊົງກ່າວແກ່ເຮົາທັງຫລາຍທາງພຣະບຸດ ຜູ້ຊຶ່ງພຣະອົງໄດ້ຊົງຕັ້ງໃຫ້ເປັນຜູ້ຮັບສັບພະທຸກສິ່ງທັງປວງເປັນມໍຣະດົກ ແລະດ້ວຍພຣະບຸດນັ້ນພຣະອົງໄດ້ຊົງສ້າງໂລກທັງຫລາຍ.” ເຮັບເຣີ 1:1-2

ທ່ານເຄີຍເວົ້າກັບພຣະເຈົ້າໂດຍກົງບໍ່? ທ່ານສາມາດໄດ້ຍິນພຣະສຸຣະສຽງຂອງພຣະອົງບໍ່? ຄຳຕອບທີ່ຊັດເຈນກໍ່ຄື: "ບໍ່ເຄີຍ"

ພວກເຮົາເຄີຍໄດ້ກ່າວກັບພຣະເຈົ້າໃນພຽງທາງອ້ອມເທົ່ານັ້ນ, ໂດຍຜ່ານທາງ (ການອະທິຖານ, ພຣະຄຳພີ, ຜູ້ປະກາດພຣະທຳ, ...)

ເຫດຜົນຫຍັງທີ່ພວກເຮົາບໍ່ສາມາດກ່າວກັບພຣະເຈົ້າໂດຍກົງໄດ້? ມັນເປັນແບບນີ້ມາຕັ້ງແຕ່ຕົ້ນເລີຍບໍ? ແລ້ວພວກເຮົາຈະມີໂອກາດລົມກັບພຣະອົງໂດຍກົງໄດ້ບໍ່?






1. ໃນເລີ່ມຕົ້ນພຣະເຈົ້າສື່ສານກັບມະນຸດທາງໃດ?
2. ມະນຸດເຊົາສື່ສານກັບພຣະເຈົ້າຍ້ອນຫຍັງ?
3. ພຣະເຈົ້າເຮັດແນວໃດທີ່ຈະເຮັດໃຫ້ການສື່ສານກັບມາຄືເກົ່າ?
4. ເປັນຫຍັງປະຈຸບັນນີ້ພວກເຮົາຈຶ່ງບໍ່ສາມາດລົມກັບພຣະອົງໄດ້ໂດຍກົງ?
5. ແລ້ວໃນມື້ນີ້ ພວກເຮົາຈະສື່ສານກັບພຣະອົງແນວໃດ?

# ໃນເລີ່ມຕົ້ນພຣະເຈົ້າສື່ສານກັບມະນຸດທາງໃດ?

"ແລ້ວພຣະເຈົ້າຢາເວພຣະເຈົ້າສັ່ງລາວວ່າ, "ໝາກໄມ້ທຸກຕົ້ນໃນສວນນີ້ເຈົ້າກິນໄດ້" ປະຖົມມະການ 2:16







ໃນປະຖົມມະການ ພຣະເຈົ້າຊົງສ້າງໂລກຂຶ້ນເພື່ອໃຫ້ມະນຸດຢູ່ອາໄສ (ອຊຢ 45:18).

ເມື່ອທຸກສິ່ງພ້ອມແລ້ວ, ພຣະອົງຊົງສ້າງອາດາມຂຶ້ນຈາກຂີ້ດິນ (ປຖມກ 2:4-7).

ໃນວັນດຽວກັນນັ້ນ ພຣະອົງໄດ້ຊົງສ້າງເອວາ ຈາກກະດູກຂ້າງຂອງອາດາມ (ປຖມກ 2:18, 21-22).





ມະນຸດທັງໝົດຈຶ່ງມີຄວາມສົມບູນ ແລະ ກຽມພ້ອມທີ່ຈະຢູ່ອາໄສເທິງໂລກທີ່ຖືກສ້າງຂຶ້ນໃໝ່ນີ້(ປຖມກ 1:27).

# ໃນເລີ່ມຕົ້ນພຣະເຈົ້າສື່ສານກັບມະນຸດທາງໃດ?

"ແລ້ວພຣະເຈົ້າຢາເວພຣະເຈົ້າສັ່ງລາວວ່າ, "ໝາກໄມ້ທຸກຕົ້ນໃນສວນນີ້ເຈົ້າກິນໄດ້" ປະຖົມມະການ 2:16



ໃນຂະນະທີ່ທຸກຢ່າງດຳເນີນໄປນັ້ນ, ໄດ້ມີການສື່ສານໂດຍກົງຢ່າງຫລາຍລະຫວ່າງພຣະເຈົ້າກັບອາດາມ:

- ພຣະອົງຊົງບອກສອນເຖິງວຽກງານທີ່ອາດາມຄວນຈະເຮັດທີ່ສວນ (ປຖມກ 2:15).
- ພຣະອົງບອກເຖິງຂໍ້ຈຳກັດຫລືສິ່ງທີ່ບໍ່ຄວນເຮັດ (ປຖມກ 2:16-17).
- ພຣະອົງຂໍໃຫ້ອາດາມຕັ້ງຊື່ໃຫ້ກັບສັດ (ປຖມກ 2:19).
- ພຣະອົງແນະນຳອາດາມໃຫ້ເອວາ ແລະ ຈັດງານແຕ່ງໃຫ້ (ປຖມກ 2:22-24).

# ໃນເລີ່ມຕົ້ນພຣະເຈົ້າສື່ສານກັບມະນຸດທາງໃດ?

"ແລ້ວພຣະເຈົ້າຢາເວພຣະເຈົ້າສັ່ງລາວວ່າ, "ໝາກໄມ້ທຸກຕົ້ນໃນສວນນີ້ເຈົ້າກິນໄດ້" ປະຖົມມະການ 2:16

ພຣະເຈົ້າຊົງສອນອາດາມເຖິງການວາງໂຕ ແລະສິ່ງທີ່ລາວຄວນຈະກິນ ແລະ ບໍ່ກິນ ເປັນອາຫານ (ປຖມກ 1:28-29).

ພຣະອົງຊົງສ້າງພວກເຂົາໃຫ້ຢູ່ໃນສັງຄົມຮ່ວມກັນ, ມີຄວາມສາມາດໃນການສື່ສານ, ບໍ່ພຽງແຕ່ພາຍໃນພວກເຂົາເທົ່ານັ້ນ, ແຕ່ລວມເຖິງສິ່ງທີ່ມີຊີວິດອື່ນໆ (ເຊັ່ນ: ເທວະດາ).

ຫລັງຈາກນັ້ນພຣະອົງກໍ່ຊົງສ້າງວັນພັກຜ່ອນນັ້ນກໍ່ຄືວັນທີ 7, ເພື່ອທີ່ພຣະອົງຈະໄດ້ໃຊ້ເວລາຮ່ວມກັບສິ່ງທີ່ພຣະອົງຊົງສ້າງ

ນັບຈາກນັ້ນເປັນຕົ້ນມາ, ພຣະອົງກໍ່ຊົງໄປພົບກັບພວກເຂົາໃນທຸກໆມື້ ເຊົ້າແລະແລງ (ປຖມກ 3:8 NIV).









# ມະນຸດເຊົາສື່ສານກັບພຣະເຈົ້າຍ້ອນຫຍັງ?

ລາວຕອບວ່າ: ຂ້ານ້ອຍໄດ້ຍິນສຽງຂອງພຣະອົງຢູ່ໃນສວນ, ຂ້ານ້ອຍຢ້ານຫລາຍ ຈຶ່ງຫລົບລີ້ຊ່ອນຕົວຢູ່ ເພາະຂ້ານ້ອຍເປືອຍກາຍຢູ່
(ປຖມກ 3:10)







ອາດາມ ແລະ ເອວາໄດ້ຖືກສ້າງຂຶ້ນບົນພື້ນຖານມີອິດສະຫລະໃນການເລືອກ. ເພື່ອໃຫ້ພວກເຂົາໄດ້ປະຕິບັດການເລືອກຂອງພວກເຂົານັ້ນ, ພຣະເຈົ້າຊົງໃຫ້ພວກເຂົາໃນທຸກສິ່ງ, ແຕ່ຍົກເວັ້ນຕົ້ນໄມ້ແຫ່ງຄວາມດີ ແລະ ຄວາມຊົ່ວ (ປຖມກ 2:16-17).

ໃນຕົ້ນໄມ້ນັ້ນ, ຜູ້ລໍ້ລວງ, ໄດ້ປອມຕົວ ແລະ ເຮັດເສແສ້ງວ່າມີຄວາມປາຖະໜາດີຕໍ່ອາດາມ ແລະ ເອວາ, ໄດ້ຕົວະຍົວະພວກເຂົາ, (ຈາກເອວາກ່ອນ ແລະ ນາງໄດ້ນຳໄປສູ່ອາດາມ): ເຈົ້າຈະບໍ່ຕາຍ (“ເຈົ້າຈະເປັນອຳມະຕະ”); ເຈົ້າຈະເປັນເໝືອນພຣະເຈົ້າ (“ເຈົ້າຈະເປັນພຣະເຈົ້າ”); ພຣະອົງຊົງເຊື່ອງຄວາມຈິງຈາກພວກເຈົ້າ (“ພຣະອົງຮູ້ວ່າພວກເຈົ້າຈະເປັນເໝືອນພຣະເຈົ້າ(ປຖມກ 3:1-5).

ດ້ວຍຄວາມຫລົງໄຫລໃນຄວາມດຶງດູດຂອງໝາກໄມ້ນັ້ນ, ເອວາຈຶ່ງກິນໝາກໄມ້ນັ້ນເຂົ້າໄປ ແລ້ວກໍ່ຍື່ນໃຫ້ຜົວຂອງຕົນເອງກິນພ້ອມ (ປຖມກ 3:6).

ໃນເວລານັ້ນ, ຣັດສະໝີແຫ່ງສະຫງ່າຣາສີຂອງພຣະເຈົ້າທີ່ເຄີຍປົກຄຸມພວກເຂົາກໍ່ໄດ້ຈາງຫາຍອອກໄປ; ພວກເຂົາຮູ້ວ່າຕົນເອງເປືອຍກາຍຢູ່; ແລະຊອກຫາວິທີປົກປິດຮ່າງກາຍທີ່ເປືອຍກາຍນັ້ນ(ປຖມກ. 3:7).

ຜົນໃນແງ່ລົບທີ່ຕາມມາກໍ່ຄື: ພວກເຂົາຮູ້ສຶກເຖິງຄວາມຜິດຈາກການບໍ່ເຊື່ອຟັງ ຈົນບໍ່ຢາກສື່ສານກັບພຣະເຈົ້າອີກ (ປຖມກ 3:8).





# ພຣະເຈົ້າເຮັດແນວໃດທີ່ຈະເຮັດໃຫ້ການສື່ສານກັບມາຄືເກົ່າ?

ແຕ່ພຣະເຈົ້າຢາເວໄດ້ເອີ້ນຫາຊາຍຜູ້ນັ້ນວ່າ, ເຈົ້າຢູ່ໃສ?" (ປຖມກ 3:9)



ເມື່ອຮູ້ວ່າ ອາດາມ ແລະ ເອວາ ໄດ້ເຮັດຄວາມຜິດບາບແລ້ວ, ພຣະເຈົ້າກໍ່ໄດ້ເຂົ້າມາຫາພວກເຂົາ ຕາມປົກກະຕິ ເຂົ້າຫາພວກເຂົາເພື່ອທີ່ຈະລົມກັບພວກເຂົາ. ແຕ່ນີ້ແມ່ນຄັ້ງທຳອິດທີ່ພວກເຂົາບໍ່ໄດ້ ອອກມາຕ້ອນຮັບພຣະອົງ ຄືແຕ່ກ່ອນ (ປຖມກ 3:8-9).

ເຖິງວ່າພວກເຂົາຈະບໍ່ຕ້ອງການທີ່ຈະສື່ສານກັບພຣະເຈົ້າ. ແຕ່ພຣະອົງກໍ່ຍັງຊົງປາດຖະໜາທີ່ຈະສື່ສານກັບພວກເຂົາ. ພຣະອົງຊົງຢາກໂອ້ລົມເຖິງຄວາມບາບຂອງພວກເຂົາ ເພື່ອນຳໄປສູ່ການກັບໃຈໃໝ່ (ປຖມກ 3:10-11).





ໃນເວລາຕໍ່ມາອີກຫລາຍສະຕະວັດ, ພຣະເຈົ້າຊົງທອດພຣະເນດໄປທີ່ຄົນບາບອີກຄົນໜຶ່ງ ເພື່ອນຳລາວໄປສູ່ການກັບໃຈ ຊາຍຜູ້ນັ້ນກໍ່ຄື : ເປໂຕ (ລກ22:61-62).

ຕ່າງຈາກເປໂຕຜູ້ຍອມຮັບຄວາມບາບຂອງຕົນເອງ, ຜູ້ທີ່ຍອມຮັບຄວາມບາບຂອງຕົນເອງ, ແຕ່ອາດາມ ແລະ ເອວາກັບພະຍາຍາມແກ້ໂຕຕໍ່ໜ້າພຣະເຈົ້າເລື່ອງຄວາມບາບ (ປຖມກ 3:12-13).



ໃນທຸກມື້ນີ້ພວກເຮົາກໍ່ມີພຶດຕິກຳແບບດຽວກັນ, ພວກເຮົາຍຶດຕິດກັບຄວາມບາບ ແລະ ພະຍາຍາມຫາຂໍ້ແກ້ໂຕໃຫ້ຕົນເອງ. ເຖິງວ່າຄວາມບາບຈະຍັງຄົງ "ເກາະຕິດ"ພວກເຮົາຢູ່, ພຣະເຈົ້າຍັງຄງຕ້ອງການທີ່ຈະຟື້ນຟູຄວາມສຳພັນ, ແລະ ພຣະອົງຊົງເອີ້ນພວກເຮົາ: "ຈົ່ງມາຫາເຮົາ" (ອຊຢ 55:3).

# ເປັນຫຍັງປະຈຸບັນນີ້ພວກເຮົາຈຶ່ງບໍ່ສາມາດລົມກັບພຣະອົງໄດ້ໂດຍກົງ?

"ເມື່ອພຣະເຈົ້າຂັບໄລ່ມະນຸດອອກຈາກສວນແລ້ວ ພຣະອົງກໍເອົາເທວະດາເຄຣຸບ ມາເຝົ້າສວນຢູ່ທາງທິດຕາເວັນອອກ; ແລະມີດາບທີ່ລຸກເປັນແສງໄຟແກວ່ງໄປມາທົ່ວທຸກທິດ ເພື່ອປ້ອງກັນບໍ່ໃຫ້ເຂົ້າໄປໃກ້ຕົ້ນໄມ້ແຫ່ງຊີວິດນັ້ນ." ປະຖົມມະການ 3:24



ພຣະເຈົ້າຊົງເປີດເຜີຍຜົນຕາມມາຂອງຄວາມບາບໃຫ້ແກ່ຄູ່ຜົວເມຍທີ່ເຮັດບາບ ໄດ້ຮັບຮູ້, ລວມເຖິງເຫດຜົນທີ່ພວກເຂົາບໍ່ສາມາດສື່ສານກັບພຣະອົງໄດ້ໂດຍກົງອີກຕໍ່ໄປ ຫລັງຈາກຖືກຂັບໄລ່ອອກຈາກສວນເອເດັນ (ປຖມກ 3:16-24).



ກ່ອນທີ່ຈະແຈ້ງໃຫ້ຮູ້ເຖິງຜົນທີ່ຕາມມາ, ພຣະເຈົ້າຊົງໃຫ້ພວກເຂົາຮູ້ເຖິງທາງອອກ: ເຊື້ອສາຍຂອງເອວາຈະທຳລາຍອຳນາດຂອງຜີມານ ແລະ ຈະກອບກູ້ມະນຸດຊາດ (ປຖມກ 3:15).

ຜ່ານທາງຜູ້ປະກາດພຣະຄຳ, ພຣະອົງຊົງບອກເຖິງວິທີທີ່ທາງທີ່ຈະເຮັດໃຫ້ມະນຸດໄດ້ຮັບຄວາມລອດອີກຄັ້ງ: ພຣະເຈົ້າຈະຊົງກັບມາບັງເກີດເປັນມະນຸດ, ທົນທຸກທໍລະມານ ແລະ ເຖິງແກ່ຄວາມຕາຍ, ຟື້ນຄືນຊີບ ແລະ ປະທານຊີວິດນິຣັນດອນໃຫ້ແກ່ພວກເຮົາ (ອຊຢ 9:6; 53:6, 10-11).

ທັນທີທີ່ຄວາມບາບໄດ້ເກີດຂຶ້ນ, ພຣະສັນຍາຂອງພຣະເຈົ້າກໍຖືກມອບໃຫ້ທັນທີ

## ຜົນກະທົບຕໍ່

**ເອວາ**
- ຄວາມເຈັບປວດຕອນເກີດລູກ
- ສູນເສຍຄວາມເທົ່າທຽມກັບອາດາມ

**ອາດຳ**
- ເຮັດວຽກໜັກ
- ປູກພືດພັນອາຫານ

**ທຸກຄົນ**
- ຄວາມຕາຍ
- ຖືກຕັດຂາດຈາກພຣະເຈົ້າ



# ແລ້ວພວກເຮົາຈະສື່ສານກັບພຣະເຈົ້າແນວໃດ?



“ບັດນີ້ມະນຸດເອີຍ ເຮົາແຕ່ງຕັ້ງເຈົ້າໃຫ້ເປັນຜູ້ເຝົ້າຍາມຊົນຊາດອິດສະຣາເອນ. ເຈົ້າຕ້ອງນຳຄຳຕັກເຕືອນທີ່ເຮົາໄດ້ມອບໃຫ້ເຈົ້ານັ້ນໄປບອກພວກເຂົາ.”
ເອເຊກຽນ 33:7





ເພື່ອທີ່ຈະສື່ສານກັບພວກເຮົາໃນທຸກມື້ນີ້, ພຣະອົງໄດ້ຊົງຂຽນ “ໜັງສືອ້າງອີງໄວ້ສອງເຫລັ້ມ”: ການຊົງສ້າງ ແລະ ພຣະຄຳພີ (ໂຣມ 1:20; 2 ຕມທ 3:15).



ເຖິງວ່າການຊົງສ້າງຈະບອກໃຫ້ພວກເຮົາຮູ້ເຖິງພຣະຜູ້ສ້າງ, ແຕ່ສິ່ງນີ້ກໍ່ໄດ້ຮັບຜົນກະທົບໜັກຈາກຄວາມບາບ, ໃນທາງກັບກັນ ພຣະຄຳພີມີແນວທາງທີ່ຊັດເຈນ ແລະ ຕົງໄປຕົງມາ, ເຊິ່ງຖ່າຍທອດຜ່ານທາງຜູ້ເຜີຍພຣະວັດຈະນະ ຜູ້ທີ່ໄດ້ຮັບຂ່າວສານຈາກພຣະເຈົ້າ, ນອກຈາກນີ້ ໃນພຣະຄຳພີ ພວກເຮົາຍັງໄດ້ພົບກັບການສຳແດງພຣະລັກສະນະຂອງພຣະອົງໃນແບບທີ່ສົມບູນທີ່ສຸດ. ຜ່ານທາງພັນທະກິດ ແລະ ການສິ້ນພຣະຊົນຂອງພຣະອົງ.
(ຮຣ 1:1-2).





ໃນພຣະຄຳພີ, ພວກເຮົາຄົ້ນພົບວ່າ ພວກເຮົາແມ່ນໃຜ? ມາແຕ່ໃສ? ແລະ ກຳລັງຈະໄປບ່ອນໃດ? ແລະ ໄດ້ຮູ້ຈັກພຣະປະສົງຂອງພຣະເຈົ້າທີ່ມີຕໍ່ພວກເຮົາ

ຫລາຍໄປກວ່ານັ້ນ, ພຣະອົງຊົງສື່ສານກັບພວກເຮົາຜ່ານທາງການອະທິຖານ (ພສລສ 5:2); ທູດເທວະດາ (ກຈກ 8:26); ຜູ້ທຳນວາຍ (ຢອ 2:28); ແລະ ໂດຍສະເພາະແມ່ນຜ່ານທາງ ພຣະວິນຍານບໍຣິສຸດ (ຢຮ 14:26).

"ປົກກະຕິຈະມີການຮ່ວມມືກັນລະຫວ່າງມະນຸດ ແລະ ພຣະເຈົ້າ. ແຕ່ແຜນການນີ້ໄດ້ຖືກຂັດຂວາງຢ່າງຮຸນແຮງໂດຍການລ່ວງລະເມີດຂອງອາດາມ. ຊາຕານໄດ້ຊັກນຳໃຫ້ລາວເຮັດບາບ, ແລະ ອົງພຣະຜູ້ເປັນເຈົ້າຈະບໍ່ຊົງຕິດຕໍ່ສື່ສານກັບລາວຫຼັງຈາກທີ່ລາວໄດ້ເຮັດບາບຄືກັນກັບຕອນທີ່ລາວຍັງບໍ່ມີບາບອີກຕໍ່ໄປ.

ຫຼັງຈາກຕົກຢູ່ໃນຄວາມບາບແລ້ວ, ພຣະຄຣິດໄດ້ຊົງກາຍເປັນຜູ້ອົບຮົມສັ່ງສອນຂອງອາດາມ. ພຣະອົງຊົງເຮັດໜ້າທີ່ເປັນພຣະເຈົ້າຕໍ່ມະນຸດສະຍະຊາດ, ໂດຍຊ່ວຍເຜົ່າພັນມະນຸດໃຫ້ພົ້ນຈາກຄວາມຕາຍໃນທັນທີ. ພຣະອົງຊົງຮັບເອົາຕຳແໜ່ງເປັນຜູ້ກາງ/ຜູ້ໄກ່ເກ່ຍ. ອາດາມ ແລະ ເອວາ ໄດ້ຮັບໄລຍະເວລາແຫ່ງການທົດລອງເພື່ອທີ່ຈະກັບຄືນມາສູ່ຄວາມຈົງຮັກພັກດີຂອງພວກເຂົາ, ແລະ ໃນແຜນການນີ້ ລູກຫຼານທັງໝົດຂອງພວກເຂົາກໍໄດ້ຖືກນັບລວມເຂົ້າຢູ່ດ້ວຍ.

ຖ້າຫາກຂາດການໄຖ່ບາບຂອງພຣະບຸດຂອງພຣະເຈົ້າແລ້ວ, ກໍຈະບໍ່ສາມາດມີການສົ່ງຕໍ່ພຣະພອນ ຫຼື ການຊ່ວຍໃຫ້ພົ້ນຈາກພຣະເຈົ້າໄປສູ່ມະນຸດໄດ້. ພຣະເຈົ້າຊົງຫວງແຫນກຽດຕິຍົດ ແລະ ພຣະບັນຍັດຂອງພຣະອົງ. ການລ່ວງລະເມີດກົດນັ້ນກໍ່ໃຫ້ເກີດການແຍກອອກຈາກກັນຢ່າງໜ້າຢ້ານກົວລະຫວ່າງພຣະເຈົ້າ ແລະ ມະນຸດ. ສຳລັບອາດາມໃນຕອນທີ່ຍັງບໍລິສຸດຢູ່ນັ້ນ, ລາວໄດ້ຮັບສິດໃນການຕິດຕໍ່ສື່ສານກັບຜູ້ສ້າງຂອງລາວໂດຍກົງ, ຢ່າງມີອິດສະຫຼະ, ແລະ ຢ່າງມີຄວາມສຸກ. ແຕ່ຫຼັງຈາກການລ່ວງລະເມີດກົດບັນຍັດຂອງພຣະເຈົ້າ, ພຣະເຈົ້າຈະຊົງຕິດຕໍ່ສື່ສານກັບມະນຸດຜ່ານທາງພຣະຄຣິດ ແລະ ເຫຼົ່າທູດສະຫວັນເທົ່ານັ້ນ."

**EGW (Conflict and Courage, January 14)**

# APPENDIX: ຊີວະປະຫວັດຂອງທ່ານນາງ ເອເລັນ ຈີ ໄວທ໌



ເອເລັນ ກູດ (Ellen Gould) ແລະ ເລລີຊາເບັດ ຮາໂມນ (Elizabeth Harmon), ລູກສາວຄົນຫລ້າໃນຈຳນວນພີ່ນ້ອງທັງໝົດ 8 ຄົນ, ສຸດຂອງ (ອູໄນ໌) Eunice ແລະ ໂຣເບີດ (Robert Harmon's) ເພິ່ນເກີດໃນວັນທີ 26 ພະຈິກ ປີ 1827 ທີ່ເມືອງ ກໍຮາມ Gorham, ລັດ ເມນ Maine ປະເທດ ອາເມລິກາ USA.

ຫລັງຈາກນັ້ນຄອບຄົວຂອງເພິ່ນກໍ່ໄດ້ຍ້າຍໄປທີ່ເມືອງ ພອດແລນ Portland, ເມືອງຫລັກຂອງ ລັດ ເມນ Maine, ເພື່ອທີ່ຈະຂະຫຍາຍທຸລະກິດຄອບຄົວ.

ທ່ານ ນາງເອເລັນ ຈີ ໄວທ໌ ໄດ້ອາຍຸ 9 ປີ, ໝູ່ຂອງນາງຄົນໜຶ່ງໄດ້ເອົາກ້ອນຫີນດຶກໃສ່ນາງ, ເຮັດໃຫ້ໃບໜ້າຂອງ ເອເລັນ ຈີ ໄວທ໌ ໄດ້ຮັບຄວາມບາດເຈັບສາຫັດ, ຍ້ອນຜົນກະທົບຈາກບາດແຜເຮັດໃຫ້ບໍ່ສາມາດຮຽນຕໍ່ໄດ້ ແລະ ມີຂໍ້ຈຳກັດທາງການໃຊ້ຊີວິດຂອງເພິ່ນ ຢ່າງຫລາຍ.





ຄອບຄົວຂອງລາວໄດ້ຮັບເອົາຄຳສອນ ຂອງທ່ານ ວິນລ່ຽມ ມິນເລີ William Miller's , ແລະ ທ່ານ ເອເລັນ ໄດ້ຮັບບັບຕິສະມາໃນປີ 1842 ຂອງໂບດເມໂທດິດ.

ແຕ່ທ່ານ ເອເລັນ ຈີ ໄວທ໌ ຮູ້ສຶກສັບສົນ ແລະ ເບິ່ງວ່າຕົນເອງບໍ່ຄູ່ຄວນທີ່ຈະໄດ້ຮັບຄວາມລອດ, ຈົນກະທັ້ງສາສະໜາຈານ ເລວີ ສະໂຕກແມນ Pastor Levi Stockman ຊ່ວຍໃຫ້ເພິ່ນໄດ້ເຂົ້າໃຈເຖິງຄວາມຮັກອັນແທ້ຈິງຂອງພຣະເຈົ້າ

ນັບຕັ້ງແຕ່ນັ້ນເປັນຕົ້ນມາ, ເພິ່ນມີຄວາມຮັກອັນເລິກເຊິ່ງຕໍ່ພຣະເຢຊູ ແລະ ໄດ້ອຸທິດຕົນຮັບໃຊ້ພຣະອົງຕະຫລອດຊ່ວງຊີວິດທີ່ເຫລືອຂອງເພິ່ນ

